ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

☆☆☆☆☆☆

ກະຊວງການເງິນ

ເລກທີ 1939 /ກງ

ນະຄອນຫຼວງວຽງຈັນ, ວັນທີ 16 JUL 2013

# ແຈ້ງການ

ເຖິງ: ທ່ານຫົວໜ້າພະແນກສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ປັບປຸງບາງເນື້ອໃນ ຂອງຄຳສັ່ງແນະນຳເລກທີ 1766/ກງ, ລົງວັນທີ 05/07/2013.

- ອີງຕາມຄຳສັ່ງແນະນຳເລກທີ 1766/ກງ, ລົງວັນທີ 05/07/2013 ກ່ຽວກັບການເພີ່ມທະວີການຄຸ້ມຄອງ ເກັບລາຍຮັບສ່ວຍສາອາກອນຈາກຍານພາຫະນະທຸກປະເພດ.

ກະຊວງການເງິນ ຂໍແຈ້ງມາຍັງບັນດາທ່ານ ຫົວໜ້າພະແນກສ່ວຍສາອາກອນແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ຊາບວ່າ: ກະຊວງການເງິນໄດ້ປັບປຸງເນື້ອໃນ ຂໍ້ທີ 2 ຂອງຄຳສັ່ງແນະນຳເລກທີ 1766/ກງ, ລົງວັນທີ 05/07/2013 ເປັນເນື້ອໃນໃໝ່ດັ່ງນີ້:

2. ສຳລັບການຂາຍພາຫະນະຢູ່ພາຍໃນປະເທດ: ວິທີການຄິດໄລ່ເກັບອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ໃຫ້ປະຕິບັດດັ່ງນີ້:
   - ວິທີການຄິດໄລ່ເກັບອາກອນຊົມໃຊ້ : ແມ່ນໃຫ້ເອົາລາຄາຂາຍພາຫະນະຕົວຈິງ ຄູນ ກັບອັດຕາອາກອນຊົມໃຊ້ ;
   - ວິທີການຄິດໄລ່ເກັບອາກອນມູນຄ່າເພີ່ມ : ແມ່ນໃຫ້ເອົາລາຄາຂາຍພາຫະນະຕົວຈິງຄູນກັບອັດຕາອາກອນມູນຄ່າເພີ່ມ ;

ເນື້ອໃນ ຂໍ້ 2 ຂອງແຈ້ງການສະບັບນີ້ ປ່ຽນແທນສະເພາະ ຂໍ້ທີ 2 ຂອງຄຳສັ່ງແນະນຳ ເລກທີ 1766/ກງ ເທົ່ານັ້ນ, ສ່ວນເນື້ອໃນອື່ນໆ ຂອງຄຳສັ່ງແນະນຳ ເລກທີ 1766/ກງ ດັ່ງກ່າວ ແມ່ນຍັງຮັກສາໄວ້ເໝືອນເດີມ;

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງການເງິນ

ພູເພັດ ຄຳພູນວົງ

ບ່ອນສົ່ງ:
- ທ່ານ ນາຍົກ-ຮອງນາຍົກ 05 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ຫ້ອງວ່າການລັດຖະບານ 01 ສະບັບ
- ກົມສ່ວຍສາອາກອນກະຊວງການເງິນ 01 ສະບັບ
- ພະແນກການເງິນແຂວງ ແລະ ນະຄອນຫລວງ 01 ສະບັບ
- ພະແນກສ່ວຍສາອາກອນປະຈຳແຂວງ ແລະ ນະຄອນຫລວງ 01 ສະບັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************

ກະຊວງການເງິນ — ເລກທີ 1766 /ກງ

ນະຄອນຫລວງວຽງຈັນ,ວັນທີ 05 JUL 201

# ຄຳສັ່ງແນະນຳ

ເຖິງ : ຫົວໜ້າພະແນກສ່ວຍສາອາກອນປະຈຳແຂວງ ແລະ ນະຄອນຫລວງວຽງຈັນໃນຂອບເຂດທົ່ວປະເທດ.

ເລື່ອງ : ເພີ່ມທະວີການຄຸ້ມຄອງເກັບລາຍຮັບສ່ວຍສາອາກອນຈາກຍານພາຫະນະທຸກປະເພດ.

- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກທີ 04/ສພຊ,ລົງວັນທີ 19 ພຶດສະພາ 2005 ;
- ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 04/ສພຊ,ລົງວັນທີ 26 ທັນວາ 2006 ;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 389/ນຍ, ລົງວັນທີ 12 ກັນຍາ 2012, ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດສົກປີ 2012-2013 ;
- ອີງຕາມກອງປະຊຸມຂະແໜງການເງິນ ແລະ ຂະແໜງການສ່ວຍສາອາກອນຄັ້ງວັນທີ 03 ພຶດສະພາ 2013.

ເພື່ອຄຸ້ມຄອງເກັບລາຍຮັບຈາກທຸລະກິດຍານພາຫະນະໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບກົດໝາຍ, ລັດຖະມົນຕີວ່າການກະຊວງການເງິນ ອອກຄຳສັ່ງແນະນຳ ກ່ຽວກັບການຈັດເກັບພາສີ-ອາກອນຈາກຍານພາຫະນະໃນຂອບເຂດທົ່ວປະເທດ ຄື ດັ່ງນີ້ :

1. ສຳລັບຂອດນຳເຂົ້າ :

ການຈັດເກັບພາສີ, ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ຈາກບໍລິສັດ, ສາຂາບໍລິສັດ ຫຼື ຕົວແທນຈຳໜ່າຍ ທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າຍານພາຫະນະທຸກປະເພດ ທີ່ດ່ານພາສີຊາຍແດນ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດເກັບຕາມລາຄາກາງ ທີ່ກະຊວງການເງິນ ໄດ້ກຳນົດໄວ້ ຄືເກົ່າ ໄປຈົນກວ່າຈະມີການປ່ຽນແປງ;

ກ່ອນຈະນຳຍານພາຫະນະອອກຈາກດ່ານພາສີ ຕ້ອງໄດ້ເສຍພາສີ-ອາກອນໃຫ້ຄົບຖ້ວນ, ວິທີຄິດໄລ່ເກັບຄ່າພາສີ -ອາກອນ ໃນເວລານຳເຂົ້າຍານພາຫະນະ ໃຫ້ປະຕິບັດດັ່ງນີ້ :

- ການຄິດໄລ່ເກັບພາສີຂາເຂົ້າ ແມ່ນໃຫ້ເອົາມູນຄ່າແຈ້ງເສຍພາສີ ຕາມລາຄາກາງ ຄູນກັບ ອັດຕາພາສີຂາເຂົ້າ;
- ການຄິດໄລ່ອາກອນຊົມໃຊ້ ແມ່ນໃຫ້ເອົາມູນຄ່າແຈ້ງເສຍພາສີ ບວກ ຄ່າພາສີ ຄູນກັບອັດຕາອາກອນຊົມໃຊ້ ;
- ການຄິດໄລ່ເກັບອາກອນມູນຄ່າເພີ່ມ ແມ່ນໃຫ້ເອົາມູນຄ່າແຈ້ງເສຍພາສີຂາເຂົ້າ ບວກ ຄ່າພາສີຂາເຂົ້າ ບວກ ອາກອນຊົມໃຊ້ ແລະ ຄ່າທຳນຽມອື່ນໆ (ຖ້າມີ ) ຄູນກັບ ອັດຕາອາກອນມູນຄ່າເພີ່ມ.

2. ສຳລັບການຂາຍພາຫະນະຢູ່ພາຍໃນປະເທດ: ວິທີການຄິດໄລ່ເກັບອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ໃຫ້ປະຕິບັດດັ່ງນີ້ :

- ວິທີການຄິດໄລ່ເກັບອາກອນຊົມໃຊ້ : ແມ່ນ ໃຫ້ເອົາສ່ວນຜິດດ່ຽງຂອງລາຄາຂາຍຍານພາຫະນະຕົວຈິງມາລົບໃຫ້ຕົ້ນທຶນ ໃນເວລານຳເຂົ້າ (ຕົ້ນທຶນເວລານຳເຂົ້າລວມມີ : ມູນຄ່າແຈ້ງເສຍພາສີ ບວກ ຄ່າພາສີຂາເຂົ້າ ບວກ ອາກອນຊົມໃຊ້ ) ຄູນກັບອັດຕາອາກອນຊົມໃຊ້ ;
- ວິທີການຄິດໄລ່ເກັບອາກອນມູນຄ່າເພີ່ມ : ແມ່ນໃຫ້ເອົາລາຄາຂາຍຕົວຈິງ ທີ່ລວມມີອາກອນຊົມໃຊ້ ຄູນກັບ ອັດຕາອາກອນມູນຄ່າເພີ່ມ ;

ຕົວຢ່າງ : ບໍລິສັດ (ກ) ນຳເຂົ້າລົດກະບະໂຕໂຍຕາ ວີໂກ ລຸ້ນສູງ, ມູນຄ່າແຈ້ງເສຍພາສີຂາເຂົ້າຕາມລາຄາ ກາງ 12,500 ໂດລາ, ອັດຕາພາສີ 30%, ອັດຕາອາກອນຊົມໃຊ້ 25%,ອັດຕາອາກອນມູນຄ່າເພີ່ມ 10% ; ຈາກນັ້ນບໍລິສັດ (ກ) ໄດ້ຂາຍລົດຄັນດັ່ງກ່າວໃນມູນຄ່າ 45,000 ໂດລາ.ວິທີຄິດໄລ່ເກັບພາສີ-ອາກອນແມ່ນ ໃຫ້ປະຕິບັດດັ່ງນີ້ :

1. ຂອດນຳເຂົ້າ

- ຄ່າພາສີຂາເຂົ້າ : 12,500x30% = 3,750 ໂດລາ ;
- ອາກອນຊົມໃຊ້ ( 12,500+3,750 ) x25%= 4,062.5 ໂດລາ ;
- ອາກອນມູນຄ່າເພີ່ມ ( 12,500+3,750+4,062.5 ) x10%= 2,031.25 ໂດລາ;

ລວມພາສີ ແລະ ອາກອນທີ່ຕ້ອງມອບຢູ່ດ່ານພາສີຂາເຂົ້າ : 9,843.75 ໂດລາ.

2. ຂອດຂາຍພາຍໃນ

- ອາກອນຊົມໃຊ້: 45,000 x 25% = 11.250 ໂດລາ.

ອາກອນຊົມໃຊ້ຕ້ອງມອບຕື່ມ:11,250 - 4.062,5 = 7.187,50 ໂດລາ.

- ອາກອນມູນຄ່າເພີ່ມ 45,000x10%= 4,500 ໂດລາ.

ອາກອນມູນຄ່າເພີ່ມຕ້ອງມອບຕື່ມ 4,500 -2,031.25 =2,468.75 ໂດລາ

ລວມອາກອນທີ່ຕ້ອງມອບຕື່ມເວລາຂາຍພາຍໃນ = 9,656.25 ໂດລາ.

3. ມອບໃຫ້ພະແນກສ່ວຍສາອາກອນປະຈຳແຂວງ ແລະ ນະຄອນຫລວງວຽງຈັນໃນຂອບເຂດທົ່ວປະເທດ ຈັດຕັ້ງປະຕິບັດການເກັບອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ນຳບັນດາບໍລິສັດ, ສາຂາບໍລິສັດ ຫຼື ຕົວແທນຈຳໜ່າຍ ຍານພາຫະນະທຸກປະເພດ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ຕາມລາຄາຊື້-ຂາຍຕົວຈິງ ;

4. ໃຫ້ພະແນກສ່ວຍສາອາກອນປະຈຳແຂວງ ແລະ ນະຄອນຫລວງ ລາຍງານຜົນການຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ໃຫ້ກົມສ່ວຍສາອາກອນ ແລະ ອຳນາດການປົກຄອງທ້ອງຖິ່ນຮັບຊາບນຳ ຢ່າງເປັນປົກກະຕິ; ພ້ອມນັ້ນໃຫ້ພະແນກສ່ວຍສອາກອນບັນດາແຂວງປະສານສົມທົບຊິ່ງກັນ ແລະ ກັນໃນການຈັດຕັ້ງປະຕິບັດເພື່ອອັດຊ່ອງຫວ່າງການຫລົບຫລີກການເສຍອາກອນຈາກແຂວງໜຶ່ງໄປເສຍອາກອນຢູ່ອີກແຂວງໜຶ່ງ.

5. ນອກຈາກເນື້ອໃນ 4 ຂໍ້ ຂອງຄຳສັ່ງແນະນຳສະບັບນີ້ ໃຫ້ພະແນກສ່ວຍສາອາກອນປະຈຳແຂວງ ແລະ ນະຄອນຫລວງວຽງຈັນເພີ້ມທະວີ ແລະ ເອົາໃຈໃສ່ປະຕິບັດຕາມຄຳສັ່ງແນະນຳຂອງກົມສ່ວຍສາອາກອນ ສະບັບເລກທີ 4340/ກງ.ກສອ, ລົງວັນທີ 29 ພຶດສະພາ 2013 ໃຫ້ໄດ້ຮັບຜົນເປັນຢ່າງດີ;

6. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຫ້ຈັດຕັ້ງປະຕິບັດໄປຈົນກວ່າຈະມີການປ່ຽນແປງ.

ລັດຖະມົນຕີວ່າການກະຊວງການເງິນ.

ພູເພັດ ຄຳພູນວົງ

ບ່ອນສົ່ງ:

- ທ່ານ ນາຍົກ-ຮອງນາຍົກ 05 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ຫ້ອງວ່າການລັດຖະບານ 01 ສະບັບ
- ກົມສ່ວຍສາອາກອນກະຊວງການເງິນ 01 ສະບັບ
- ພະແນກການເງິນແຂວງ ແລະ ນະຄອນຫລວງ 01 ສະບັບ
- ພະແນກສ່ວຍສາອາກອນປະຈຳແຂວງ ແລະ ນະຄອນຫລວງ 01 ສະບັບ